# ການເຂົ້າຮ່ວມການຕິດຕາມ ປະສິດທິຜົນການຮ່ວມມື ເພື່ອການພັດທະນາ ໃນລະດັບສາກົນ ຄັ້ງທີ IV ຂອງ ສປປ ລາວ

**ນຳສະເໜີໂດຍ**

**ທ່ານ ນາງ ພອນອັນ ອຸທະວົງ**

**ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ**

# ເນື້ອໃນ

1. ຄວາມເປັນມາ ແລະ ຈຸດປະສົງ
2. ວິທີການ
3. ຜົນຂອງການເຂົ້າຮ່ວມ ການຕິດຕາມປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ ໃນລະດັບສາກົນ ຄັ້ງທີ IV
4. ທິດທາງໃນຕໍ່ໜ້າ



Global Partnership for Effective Development Co-operation

# ຄວາມເປັນມາ

- **ການຕິດຕາມປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ ໃນລະດັບສາກົນ (GPEDC)** ສ້າງຕັ້ງໃນປີ 2011 ໂດຍມີ 163 ປະເທດເຂົ້າຮ່ວມທີ່ ບູຊານ, ສ. ເກົາຫຼີ ເພື່ອເພີ່ມທະວີປະສິດທິຜົນຂອງການພັດທະນາ ແລະ ປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍ SDGs ໂດຍຕິດຕາມປະສິດທິຜົນຂອງການຈັດຕັ້ງປະຕິບັດບັນດາຄໍາໝາຍໝັ້ນການຮ່ວມມືເພື່ອການພັດທະນາ. **ໃນປີ 2023, ສປປ ລາວ** ໄດ້ເຂົ້າຮ່ວມການຕິດຕາມ GPEDC ຄັ້ງທີ 4 (2023-2026) ຊຶ່ງໄດ້ປະກາດການລິເລີ່ມທີ່ກອງປະຊຸມລະດັບສູງ ກ່ຽວກັບການຮ່ວມມືສາກົນ ໃນປີ 2022.
- **ກົມຮ່ວມມືສາກົນ,** ກະຊວງແຜນການ ແລະ ການລົງທຶນ ເຮັດໜ້າທີ່ເປັນຜູ້ປະສານງານລະດັບຊາດ ສໍາລັບ ການຕິດຕາມປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ GPEDC.
- **ການຕິດຕາມ GPEDC** ໄດ້ຮັບການຈັດຕັ້ງປະຕິບັດ ບົນພື້ນຖານສີ່ຫຼັກການຂອງການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນຂອງສາກົນຄື:

    1. ຄວາມເປັນເຈົ້າການຂອງປະເທດ
    2. ການສຸມໃສ່ຜົນໄດ້ຮັບ
    3. ການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ
    4. ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບຮ່ວມກັນ

# ຈຸດປະສົງ

**ຍົກລະດັບກົນໄກການປະສານງານ ການຮ່ວມມືເພື່ອການພັດທະນາ ເພື່ອໃຫ້ສອດຄ່ອງກັບ ຖະແຫຼງການວຽງຈັນວ່າດ້ວຍ ການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ**:

- ເກັບກໍາຂໍ້ມູນກ່ຽວກັບການຮ່ວມມືເພື່ອການພັດທະນາຈາກແຕ່ລະພາກສ່ວນ (ຜ່ານການເຂົ້າຮ່ວມຂອງທຸກພາກສ່ວນ) ຕາມລະບົບທີ່ມີຢູ່.
- ວິເຄາະຂໍ້ມູນທີ່ໄດ້ເກັບກໍາ ເພື່ອປັບປຸງກົນໄກການປະສານງານ ແລະ ສ້າງນະໂຍບາຍກ່ຽວກັບການຮ່ວມມື ເພື່ອການພັດທະນາ.
- ນໍາໃຊ້ຜົນການຕິດຕາມ ເພື່ອສະໜັບສະໜູນວຽກງານເຊື່ອມສານການຮ່ວມມື ເພື່ອການພັດທະນາ ເຂົ້າໃນຍຸດທະສາດ ແລະ ແຜນງານ ຕ່າງໆ ເຊັ່ນ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ເປົ້າໝາຍການພັດທະນາແບບຍືນຍົງ.
- ເຂົ້າຮ່ວມກອງປະຊຸມ ທີ່ຕິດພັນກັບຂະບວນການ GPEDC ເພື່ອແລກປ່ຽນຄໍາເຫັນກ່ຽວກັບ ການຮ່ວມມືເພື່ອການພັດທະນາ.

# ຂະບວນການຕິດຕາມປະສິດທິຜົນການຮ່ວມມື ເພື່ອການພັດທະນາ (GPEDC)

## ໄລຍະທີ 1
**ການເລີ່ມຕົ້ນ**

ສູງສຸດ 3 ເດືອນ

## ໄລຍະທີ 2
**ເກັບກຳຂໍ້ມູນ**

ສູງສຸດ 6 ເດືອນ

## ໄລຍະທີ 3
**ທົບທວນ ແລະ ສົ່ງຂໍ້ມູນ**

ສູງສຸດ 3 ເດືອນ

## ໄລຍະທີ 4
**ເຜີຍແຜ່ຜົນການທົບທວນ ແລະ ກ້າວໄປສູ່ການຈັດຕັ້ງປະຕິບັດ**

ສູງສຸດ 3 ເດືອນ

## ໄລຍະທີ 5
**ສັງເກດຕິລາຄາ, ປຶກສາຫາລື ແລະ ການຈັດຕັ້ງປະຕິບັດ**

ຈັດຕັ້ງປະຕິບັດຈົນຮອດໄລຍະໃໝ່

ໄລຍະທີ 1 → ໄລຍະທີ 2 → ໄລຍະທີ 3 → ໄລຍະທີ 4 → ໄລຍະທີ 5

# ວິທີການ

- ວິທີການ ຕິດຕາມ GPEDC ແມ່ນອີງໃສ່ການຮ່ວມມືຂອງ 4 ອົງປະກອບ ຄື: ລັດຖະບານ ສປປ ລາວ, ຄູ່ຮ່ວມພັດທະນາ, ພາກທຸລະກິດ ແລະ ອົງການຈັດຕັ້ງທາງສັງຄົມ.



# ຜົນການເຂົ້າຮ່ວມການຕິດຕາມ GPEDC ຂອງ ສປປ ລາວ

## ມິຕິທີ 1:ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ

**ໄດ້ບັນລຸ ການມີສ່ວນຮ່ວມໃນຂະບວນການຮ່ວມມື ເພື່ອການພັດທະນາ ໃນ ສປປ ລາວ ໃນລະດັບປານກາງ.**

- ໄດ້ມີຜົນສຳເລັດໃນການເພີ່ມການມີສ່ວນຮ່ວມຂອງພາສ່ວນກ່ຽວຂ້ອງ ເຂົ້າໃນການສ້າງແຜນພັດທະນາຂອງຄູ່ຮ່ວມພັດທະນາ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການເຄື່ອນໄຫວຂອງອົງການຈັດຕັ້ງທາງສັງຄົມ.
- ເຖິງຢ່າງໃດກໍຕາມ ພວກເຮົາຍັງມີຂໍ້ຈຳກັດ ໃນການເພີ່ມການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງເຂົ້າໃນຂະບວນການສ້າງ ແລະ ຕິດຕາມແຜນພັດທະນາແຫ່ງຊາດ ແລະ ສະພາແຫ່ງຊາດກໍມີຈໍ້ຈຳກັດໃນການຕິດຕາມການຮ່ວມມືເພື່ອການພັດທະນາໃນ ສປປ ລາວ.

**ມິຕິທີ 1:ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ**



# ຜົນການເຂົ້າຮ່ວມການຕິດຕາມ GPEDC ຂອງ ສປປ ລາວ

## ມິຕິທີ 2: ການນຳໃຊ້ລະບົບພາຍໃນປະເທດ

**ໄດ້ການເພີ່ມທະວີໃນການນຳໃຊ້ລະບົບພາຍໃນເຂົ້າໃນຂະບວນການພັດທະນາ ສາມາດບັນລຸໄດ້ໃນລະດັບປານກາງ.**

- ໄດ້ບັນລຸຜົນສຳເລັດໃນການນຳໃຊ້ລະບົບແຫ່ງຊາດ ສຳລັບການຈັດຊື້ ແລະ ຄຸ້ມຄອງຂໍ້ມູນ
- ເຖິງຢ່າງໃດກໍຕາມ ພວກເຮົາຍັງມີຂໍ້ຈຳກັດ ໃນການຄຸ້ມຄອງການເງິນພາກລັດ ແລະ ການຈັດສັນງົບປະມານແຫ່ງລັດ

**ມິຕິທີ 2: ການນຳໃຊ້ລະບົບພາຍໃນປະເທດ**



# ຜົນການເຂົ້າຮ່ວມການຕິດຕາມ GPEDC ຂອງ ສປປ ລາວ

## ມິຕິທີ: 3: ການຮັບປະກັນຄວາມໂປ່ງໃສ

**ຂະບວນການຮັບປະກັນຄວາມປ່ງໃສໃນ ສປປ ລາວ ສາມາດບັນລຸໄດ້ໃນລະດັບປານກາງ.**

- ພວກເຮົາຈັດຕັ້ງປະຕິບັດມາດຕະການຂອງຄູ່ຮ່ວມພັດທະນາໄດ້ດີ
- ເຖິງຢ່າງໃດກໍ່ຕາມ ພວກເຮົາຍັງມີຂໍ້ຈໍາກັດໃນການຈັດຕັ້ງປະຕິບັດມາດຕະການຂອງລັດຖະບານ



# ຜົນຂອງ GPEDC ຢູ່ໃນ ສປປ ລາວ

## ມິຕິທີ 4: ບໍ່ປະປ່ອຍໃຜຢູ່ຂ້າງຫຼັງ

**ຂະບວນການຈັດຕັ້ງປະຕິບັດ ທີ່ກ່ຽວຂ້ອງກັບການບໍ່ປະປ່ອຍໃຜຢູ່ຂ້າງຫຼັງຢູ່ໃນ ສປປ ລາວ ແມ່ນສາມາດບັນລຸໃນລະດັບປານກາງ.**

- ພວກເຮົາ ສາມາດຈັດຕັ້ງປະຕິບັດບັນດາເປົ້າໝາຍ ແລະ ຜົນໄດ້ຮັບໄດ້ເປັນຢ່າງດີ
- ແຕ່ເຖິງຢ່າງໃດກໍ່ຕາມ ການຈັດຕັ້ງປະຕິບັດຂອງ ພວກເຮົາ ແມ່ນຍັງມີຂໍ້ຈຳກັດທາງດ້ານຂໍ້ມູນ, ສະຖິຕິ ແລະ ການປຶກສາຫາລື.



# ທິດທາງໃນຕໍ່ໜ້າ

**2025**

**2025**

**ໄລຍະທີ 4**
ຄາດຄະເນວ່າຈະໄດ້ຮັບຜົນ
ຈາກ OECD-UNDP
ພາຍໃນຕົ້ນປີ 2025

**2025**

**2025**

**ໄລຍະທີ 5**
ການທົບທວນ
ການຈັດຕັ້ງປະຕິບັດ,
ການປຶກສາສາຫາລື
ແລະ ການດຳເນີນ
ງານ

**2026**

**2026**

**ໄລຍະທີ 5**
ການຈັດຕັ້ງປະຕິບັດ
ການປຶກສາຫາລື
ແລະ ການດຳເນີນ
ງານຕ່າງໆ

**2027**

**2027**

**ໄລຍະທີ 1**
ເລີ່ມຈັດຕັ້ງປະຕິບັດ
GPEDC ຄັ້ງທີ 5

# ບົດລາຍງານສຸດທ້າຍ
# ກ່ຽວກັບການຈັດຕັ້ງປະຕິບັດຖະແຫຼງການວຽງຈັນ (2015)
# ແລະ ຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການ
# ພັດທະນາທີ່ມີປະສິດທິຜົນ VDCAP
# (2016-2025)

**ນຳສະເໜີໂດຍ**

**ທ່ານ ນາງ ພອນອັນ ອຸທະວົງ**

**ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ**

# ເນື້ອໃນ

1. ແຜນປະຕິບັດງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ (VDCAP) 2016-2025
2. ສະຫຼຸບສັງລວມຄວາມຄືບໜ້າໂດຍລວມ
3. ທິດທາງແຜນໃນຕໍ່ໜ້າ



# ຫຼັກການທີ 1: ຄວາມເປັນເຈົ້າການ

## ຜົນສຳເລັດ

- **ຄວາມສອດຄ່ອງກັບ SDGs -** ເພີ່ມທະວີຄວາມສອດຄ່ອງຂອງແຜນແຫ່ງຊາດເຂົ້າກັບ SDGs.
- **ດ້ານຍຸດທະສາດທາງດ້ານການເງິນ -** ໄດ້ພັດທະນາຍຸດທະສາດດ້ານການເງິນແບບຮອບດ້ານສໍາລັບການພັດທະນາ.
- **ການຕິດຕາມຂອງສະພາຕໍ່ຄວາມຄືບໜ້າຕ່າງໆຂອງການຮ່ວມມື -** ເສີມຂະຫຍາຍບົດບາດໃນການວາງແຜນເພື່ອການພັດທະນາ ແລະ ຂະບວນການງົບປະມານ.

## ສິ່ງທ້າທາຍ

- **ຂໍຈໍາກັດທາງດ້ານຄວາມອາດສາມາດ -** ໂດຍສະເພາະພະນັກງານໃນຂັ້ນທ້ອງຖິ່ນຍັງມີສິ່ງທ້າທາຍໃນການຈັດຕັ້ງປະຕິບັດບັນດາແຜນການເພື່ອການພັດທະນາ.
- **ຜົນກະທົບຈາກ ພະຍາດ COVID-19 -** ໄດ້ສິ່ງຜົນກະທົບຕໍ່ຄວາມຄືບໜ້າຂອງການລິເລີ່ມໃນດ້ານຕ່າງໆຂອງການພັດທະນາ.
- **ຂໍ້ຍຸ້ງຍາກໃນຂອດການປະສານງານ -** ການປະສານງານກັບພາກສ່ວນທີ່ກ່ຽວຂ້ອງຍັງເຫັນວ່າເປັນສິ່ງທ້າທາຍ.

## ທິດທາງໃນຕໍ່ໜ້າ

- **ສ້າງຂີດຄວາມສາມາດໃຫ້ພະນັກງານທ້ອງຖິ່ນ** - ເສີມສ້າງຂີດຄວາມສາມາດໃຫ້ພະນັກງານທ້ອງຖິ່ນໃນທຸກລະດັບ.
- **ສ້າງກົນໄກການປະສານງານ** - ປັບປຸງການປະສານງານລະຫວ່າງກະຊວງ ແລະ ຂະແໜງ ການໃຫ້ມີປະສິດທິພາບກ່ວາເກົ່າ.
- **ລະບົບການຄຸ້ມຄອງ ຊກພ** - ເສີມຂະຫຍາຍປະສິດທິພາບຂອງລະບົບການຄຸ້ມຄອງ ຊກພ.








# ຫຼັກການທີ 2 ຄວາມສອດຄ່ອງ

| ຜົນສຳເລັດ | ສິ່ງທ້າທາຍ | ທິດທາງໃນຕໍ່ໜ້າ |
|---|---|---|
| • **ການນຳໃຊ້ລະບົບພາຍໃນປະເທດ** - ມີການເພີ່ມການນຳໃຊ້ລະພົບພາຍໃນຂອງປະເທດເຂົ້າໃນການພັດທະນາຢູ່ຫລາຍໂຄງການ<br>• **ການຄຸ້ມຄອງທາງດ້ານການເງິນ** - ເພີ່ມທະວີການຄຸ້ມຄອງການເງິນສາທາລະນະ.<br>• **ການປະຕິຮູບການຈັດຊື້ຈັດຈ້າງ** -ໄດ້ມີການນຳໃຊ້ ແລະ ຈັດຕັ້ງປະບັດການປະຕິຮູບຂະບວນການຈັດຊື້ຈັດຈ້າງແຫ່ງຊາດ. | • **ໜ່ວຍງານທີ່ຄູ່ຂະໜານ** - ການຈັດຄັ້ງປະຕິບັດໜ່ວຍງານທີ່ຄູ່ຂະໜານຍັງເປັນບັນຫາສິ່ງທ້າຍທາຍຢູ່ບັ້ນດາໂຄງການພັດທະນາ<br>• **ຄວາມສອດຄ່ອງໃນຂັ້ນທ້ອງຖິ່ນ** - ຄວາມສອດຄ່ອງໃນການພັດທະນາໃນຂັ້ນທ້ອງທິ່ນຍັງເຫັນວ່າມີຄວາມທ້າຍທາຍ.<br>• **ຊ່ອງຫວ່າງລະຫວ່າງການຈັດຕັ້ງປະຕິບັດກັບນະໂຍບາຍ** - ຄວາມແຕກຕ່າງລະຫວ່າງການຈັດຕັ້ງປະຕິບັດຕົວຈິງ ແລະ ບັນດານະໂຍບາຍຕ່າງໆ | • **ສ້າງຂີດຄວາມສາມາດ** - ເສີມສ້າງຂີດຄວາມສາມາດແຫ່ງຊາດໃນການຈັດຕັ້ງປະຕິບັດໂຄງການ<br>• **ຫຼຸດຜ່ອນໜ່ວຍງານຄູ່ຂະໜານ** - ສ້າງແນວທາງທີ່ເໝາະສົມໃນການຫຼຸດຜ່ອນການຈັດຕັ້ງປະຕິບັດໜ່ວຍງານຄູ່ຂະໜານ.<br>• **ການປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນ** - ເພີ່ມທະວີການປະສານງານລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ. |








# ຫຼັກການທີ 3 ຄວາມກົມກຽວ ແລະ ງ່າຍດາຍ

## ຜົນສຳເລັດ

- **ແຜນງານຮ່ວມກັນ** - ມີການເພີ່ມການລິເລີ່ມແຜນງານຮ່ວມກັນໃນບັນດາຄູ່ຮ່ວມພັດທະນາ
- **ໜ່ວຍງານຂະແໜງການ** - ເສີມສ້າງກົນໄກການປະສານງານລະຫວ່າງຂະແໜງການ.
- **ກອບຜົນໄດ້ຮັບຮ່ວມກັນ** - ມີການສ້າງ ແລະຮັບຮອງຂອບຜົນໄດ້ຮັບຮ່ວມກັນໃນການວາງແຜນພັດທະນາປະທດ

## ສິ່ງທ້າທາຍ

- **ການກະຈາຍການຊ່ວຍເຫຼືອ** - ການກະຈາຍການຊ່ວຍເຫຼືອຢ່າງຕໍ່ເນື່ອງເຂົ້າໃນການພັດທະນາ
- **ຂັ້ນຕອນທີ່ຫຼາກຫຼາຍ** - ຂັ້ນຕອນແຕກຕ່າງຂອງບັນດາຄູ່ຮ່ວມພັດທະນາໄດ້ສ້າງສິ່ງທ້າທາຍໃນການປະສານງານ.
- **ຂໍ້ຈຳກັດໃນການລະດົມທຶນກະຕ່າດຽວ** - ການນຳໃຊ້ກົນໄກການລະດົມທຶນຜ່ານກະຕ່າດຽວໃນບັນດາໂຄງການເພື່ອການພັດທະນາຍັງບໍ່ພຽງພໍ.

## ທິດທາງໃນຕໍ່ໜ້າ

- **ຍຸດທະສາດການກະຈາຍການຊ່ວຍເຫຼືອ** - ພັດທະນາຍຸດທະສາດແຫ່ງຊາດສຳລັບການກະຈາຍການຊ່ວຍເຫຼືອ
- **ຂະຫຍາຍການລະດົມທຶນຜ່ານກົນໄກກະຕ່າດຽວ** - ເພີ່ມການນຳໃຊ້ກົນໄກການລະດົມທຶນຜ່ານກະຕ່າດຽວໃນບັນດາໂຄງການເພື່ອການພັດທະນາ.
- **ເສີມສ້າງໜ່ວຍງານຂະແໜງການ** - ເສີມສ້າງ ແລະ ປັບປຸງກົນໄກການປະສານງານຂອງໜ່ວຍງານຂະແໜງການ








# ຫຼັກການທີ 4 ເປີດກ້ວາງການເປັນຄູ່ຮ່ວມເພື່ອໝາກຜົນຂອງການພັດທະນາ

## ຜົນສຳເລັດ

- **ກອບດ້ານນິຕິກຳ** - ເສີມສ້າງໂຄງສ້າງດ້ານນິຕິກຳແຫ່ງຊາດ ແລະ ຂັ້ນທ້ອງຖິ່ນ
- **ຂະບວນການໂຕະມົນ** - ມີຄວາມຄືບໜ້າໃນການຮ່ວມມືເພື່ອການພັດທະນາຜ່ານຂະບວນໂຕະມົນ.
- **ເພີ່ມການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມ** - ເພີ່ມການເຂົ້າຮ່ວມຂອງອົງການຈັດຕັ້ງທາງສັງຄົມໃນເວທີການປຶກສາຫາລື

## ສິ່ງທ້າຍທ້າຍ

- **ຄຸນນະພາບຂອງການມີສ່ວນຮ່ວມ** - ການປັບປຸງຄຸນນະພາບຂອງການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງຍັງມີຄວາມທ້າທາຍ.
- **ຂໍ້ຈຳກັດດ້ານຂີດຄວາມສາມາດ** - ຂໍ້ຈຳກັດທາງດ້ານຂີດຄວາມສາມາດຂອງບັນດາພາກສ່ວນທີ່ກ່ຽວຂ້ອງຍັງເປັນສິ່ງທ້າທາຍຕໍ່ກັບການເຂົ້າຮ່ວມຢ່າງມີປະສິດທິພາບ.
- **ການປະສານງານລະຫວ່າງຂະແໜງການ** - ການປະສານງານລະຫວ່າງຂະແໜງການທີ່ກ່ຽວຂ້ອງຍັງມີຄວາມສັບສົນ.

## ທິດທາງໃນຕໍ່ໜ້າ

- **ຍຸດທະສາດຂອງອົງການຈັດຕັ້ງທາງສັງຄົມ** - ພັດທະນາຍຸດທະສາດຮອບດ້ານສຳລັບການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມ.
- **ສ້າງຂີດຄວາມສາມາດໃຫ້ແກ່ອົງການຈັດຕັ້ງທາງສັງຄົມຂັ້ນທ້ອງຖິ່ນ** - ປັບປຸງແຜນງານໃນການສ້າງຂີດຄວາມສາມາດສຳລັບອົງການຈັດຕັ້ງທາງສັງຄົມໃນຂັ້ນທ້ອງຖິ່ນ.
- **ຝຶກອົບຮົມໃຫ້ພະນັກງານພາກລັດ** - ຝຶກອົບຮົມໃຫ້ບັນພະນັກງານລັດຖະກອນໂດຍໃຫ້ມີການສ່ວນຮ່ວມຈາກທຸກພາກສ່ວນທີ່ກ່ຽວຂ້ອງໃນການນຳໃຊ້ ແລະ ຈັດຕັ້ງປະຕິບັດ
-








# ຫຼັກການທີ 5 ຄວາມໂປ່ງໃສ, ສາມາດຄາດຄະເນໄດ້ ແລະ ຮັບຜິດຊອບຮ່ວມກັນ:

## ຜົນສຳເລັດ

- **ລະບົບຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA-MIS)** - ໄດ້ເປີດການນຳໃຊ້ລະບົບຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ
- **ການຄາດຄະເນການຊ່ວຍເຫຼືອ** - ປັບປຸງການວາງແຜນໄລຍະກາງ ສໍາລັບການຈັດສັນງົບປະມານການຊ່ວຍເຫຼືອ
- **ກອບການຕິດຕາມ ແລະ ປະເມີນຜົນ** - ຮັບຮອງກອບການຕິດຕາມ ແລະ ປະເມີນຜົນຮອບດ້ານສໍາລັບການວາງແຜນການພັດທະນາແຫ່ງຊາດ.

## ສິ່ງທ້າຍທ້າຍ

- **ຄຸນນະພາບດ້ານຂໍ້ມູນ** - ການຮັບປະກັນດ້ານຄຸນນະພາບຂໍ້ມູນ ແລະ ຄວາມທັນການຂອງຂໍ້ມູນການຊ່ວຍເຫຼືອຍັງເປັນສິ່ງທ້າທ້າຍ.
- **ການນຳໃຊ້ລະບົບ** - ຂໍ້ຈໍາກັດດ້ານການໃຊ້ງານກ່ຽວກັບຂໍ້ມູນການຊ່ວຍເຫຼືອທີ່ອີງການຈັດຕັ້ງຂອງພາກລັດຖະບານ.
- **ຂອບຄວາມຮັບຜິດຊອບ** - ກົນໄກຄວາມຮັບຜິດຊອບທີ່ແຕກຕ່າງຂັດຂວາງປະສິດທິຜົນການຕິດຕາມ.

## ທິດທາງໃນຕໍ່ໜ້າ

- **ສ້າງຂີດຄວາມສາມາດລະບົບການຄຸ້ມຄອງຂໍ້ມູນການຊ່ວຍເຫຼືອທາງການເພື່ອການພັດທະນາ** - ສ້າງແຜນງານຄວາມເຂັ້ມແຂງໃຫ້ຜູ້ໃຊ້ລະບົບ (ODA-MIS)
- **ສ້າງຍຸດທະສາດການສື່ສານ** - ພັດທະນາຂອບການສົ່ງເສີມການນຳໃຊ້ຂໍ້ມູນການຊ່ວຍເຫຼືອໃຫ້ມີປະສິດທິຜົນ.
- **ຄວາມຮັບຜິດຊອບຂອງຂະແໜງການ** - ເພີ່ມທະວີກົນໄກຄວາມຮັບຜິດຊອບສະເພາະ ແລະ ຄວາມປ່ອງໃສຂອງຂະແໜງການໃຫ້ດີຂຶ້ນ.








# ຫຼັກການທີ 6 ການລະດົມທຶນພາຍໃນປະເທດ:

## ຜົນສຳເລັດ

- **ການປະກອບສ່ວນຂອງລັດຖະບານ** - ເພີ່ມການປະກອບສ່ວນຂອງພາກລັດຖະບານເຂົ້າໃນແຜນງານໂຄງການ ແລະ ບັນດາກິດຈະກຳການພັດທະນາ.
- **ການເກັບອາກອນ** - ການຈັດຕັ້ງປະຕິບັດລະບົບຂໍ້ມູນຂ່າວສານການຄຸ້ມຄອງລາຍຮັບໄດ້ເພີ່ມອາກອນລາຍຮັບ
- **ຮູບແບບວິສາຫະກິດຂະໜາດນ້ອຍ ແລະ ກາງ** - ຂະຫຍາຍຖານຍຸດທະສາດການເກັບອາກອນຜ່ານຮູບແບບວິສາຫະກິດຂະໜາດນ້ອຍ ແລະ ກາງ.

## ສິ່ງທ້າຍທ້າຍ

- **ຂໍ້ຈຳກັດທາງດ້ານງົບປະມານ** - ຄວາມຈຳກັດໃນການຈັດສັນງົບປະມານຮ່ວມທຶນຂອງລັດຖະບານໃສ່ໃນບັນດາໂຄງການຕ່າງໆ.
- **ຄວາມບໍ່ໝັ້ນຄົງຂອງລາຍຮັບ** - ການອາໄສການເກັບລາຍຮັບຫຼັກຈາກແຫຼ່ງຊັບພະຍາກອນທຳມະຊາເຮັດໃຫ້ລາຍຮັບບໍ່ມີຄວາມໝັ້ນຄົງ.
- **ລະບົບການເກັບອາກອນ** - ສິ່ງທ້າທາຍໃນການຈັດຕັ້ງປະຕິບັດລະບົບການເກັບອາກອນ

## ທິດທາງໃນຕໍ່ໜ້າ

- **ການເສີມຂະຫຍາຍການເກັບລາຍຮັບ** - ການຈັດຕັ້ງປະຕິບັດຍຸດທະສາດເພື່ອເພີ່ມທະວີການເກັບລາຍຮັບພາຍໃນ.
- **ການກຳນົດບູລິມະສິດດ້ານງົບປະມານ** - ປັບປຸງບູລິມະສິດໃນການຈັດສັນງົບປະມານສຳລັບໂຄງການພັດທະນາ.
- **ການສ້າງຂີດຄວາມສາມາດ** - ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງລະບົບການເງິນສາທາລະນະໃຫ້ມີປະສິດທິພາບ.








# ຫຼັກການທີ 7 ການຮ່ວມມືໃຕ້-ໃຕ້, ການຮ່ວມມືສາມຫຼ່ຽມ ແລະ ການແລກປ່ຽນຄວາມຮູ້

## ຜົນສຳເລັດ

- **ຂະຫຍາຍຄູ່ຮ່ວມພັດທະນາ** - ຂະຫຍາຍເຄືອຂ່າຍໂຄງການຮ່ວມມືໃຕ້-ໃຕ້.
- **ກົນໄກການປະສານງານ** - ສ້າງກົນໄກການປະສານງານການຮ່ວມມືໃຕ້-ໃຕ້.
- **ການຮ່ວມມືສາມຫຼ່ຽມ** - ເປັນເຄື່ອງມືທີ່ມີອິດທິພົນໃນຍຸດທະສາດການພັດທະນາ

## ສິ່ງທ້າທາຍ

- **ການປະສານງານການຊ່ວຍເຫຼືອໃນຮູບແບບດັ້ງເດີມ** - ເຊື່ອມສານການຮ່ວມມືໃຕ້-ໃຕ້ ເຂົ້າກັບກົນໄກການປະສານງານຍັງມີຄວາມທ້າທາຍ.
- **ການວັດແທກຜົນໄດ້ຮັບ** - ພັດທະນາຂອບການວັດແທກທີ່ເໝາະສົມໃນການຮ່ວມມືໃຕ້-ໃຕ້ ຍັງມີຄວາມຍຸງຍາກ.
- **ການລະດົມທຶນ** - ການລິເລີ່ມໃນການລະດົມທຶນໃນການຮ່ວມມືໃຕ້-ໃຕ້ຍັງພົບອຸປະສັກ

## ທິດທາງໃນຕໍ່ໜ້າ

- **ຍຸດທະສາດແຫ່ງຊາດ** - ພັດທະນາຍຸດສະສາດແຫ່ງຊາດຮອບດ້ານສໍາລັບການຮ່ວມມືໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ.
- **ສ້າງຄວາມເຂັ້ມແຂງສູນການຮ່ວມມືໃຕ້-ໃຕ້** - ເພີ່ມທະວີຂີດຄວາມສາມາດຂອງສູນການຮ່ວມມືໃຕ້-ໃຕ້ ໃຫ້ມີການປະສານງານດີຂຶ້ນ.
- **ຂອບຜົນໄດ້ຮັບ** - ສ້າງຂອບຜົນໄດ້ຮັບທີ່ເໝາະສົມສໍາລັບການຮ່ວມມືໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ.








# ຫຼັກການທີ 8 ການສົ່ງເສີມພາກທຸລະກິດໃຫ້ເປັນຄູ່ຮ່ວມໃນການພັດທະນາ

## ຜົນສຳເລັດ

- **ການມີສ່ວນຮ່ວມຂອງພາກເອກະຊົນ** - ເປີດເວທີການປຶກສາຫາລືລະຫວ່າງພາກລັດ-ເອກະຊົນ.
- **ຄວາມຮັບຜິດຊອບທາງສັງຄົມ** - ຮັບຮອງເອົາຂອບຄວາມຮັບຜິດຊອບຕໍ່ສັງຄົມແຫ່ງຊາດ.
- **ເວທີທຸລະກິດເປົ້າໝາຍການພັດທະນາແບບຍືນຍົງ** - ເປີດເວທີປຶກສາຫາລືພາກເອກະຊົນສູ່ເປົ້າໝາຍການພັດທະນາແບບຍືນຍົງ

## ສິ່ງທ້າຍທ້າຍ

- **ຂີດຄວາມສາມາດຂອງພາກທຸລະກິດໃນຂັ້ນທ້ອງຖິ່ນ** - ຂໍ້ຈຳກັດຂອງຂີດຄວາມສາມາດຂອງບັນດາພາກທຸລະກິດໃນຂັ້ນທ້ອງຖິ່ນຍັງເປັນອຸປະສັກໃຫ້ແກ່ການມີສ່ວນຮ່ວມຢ່າງມີປະສິດທິພາບ.
- **ສະພາບແວດລ້ອມທາງດ້ານລະບຽບການ** - ສະພາບແວດລ້ອມທາງດ້ານລະບຽບຂອງພາກທະລະກິດຍັງເປັນສິ່ງທ້າທາຍໃຫ້ແກ່ການປະຕິຮູບ.
- **ການເຂົ້າຫາແຫຼ່ງທຶນ** - ການເຂົ້າຫາແຫຼ່ງທຶນຍັງເປັນຂໍ້ຈຳກັດຫຼັກສຳລັບພາກທະລຸກິດ

## ທິດທາງໃນຕໍ່ໜ້າ

- **ການສ້າງຂີດຄວາມສາມາດ** - ແຜນງານສ້າງຄວາມເຂັ້ມແຂງໃຫ້ພາກທຸລະກິດໃນຂັ້ນທ້ອງຖິ່ນເພື່ອການຈັດຕັ້ງປະຕິບັດໃຫ້ມີຄວາມຍືນຍົງ.
- **ການປະຕິຮູບທາງດ້ານລະບຽບການ** - ສືບຕໍ່ປະຕິຮູບເພື່ອປັບປຸງຄວາມສະດວກໃນການດຳເນີນທຸລະກິດ.
- **ກົນໄກທາງດ້ານການເງິນ** - ສ້າງກົນໄກນະວັດຕະກຳການເງິນເພື່ອສະໜັບສະໜູນວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ການເລີ່ມຕົ້ນດຳເນີນທຸລະກິດ.
-








# ສະຫຼຸບຄວາມຄືບໜ້າໂດຍລວມ

| ຄວາມຄືບໜ້າໂດຍລວມ | ຂໍ້ແນະນຳດ້ານຍຸດທະສາດ | ການສ້າງຂີດຄວາມສາມາດ |
|---|---|---|
| • **ການປັບປຸງທີ່ສຳຄັນ** - ຄວາມຄືບໜ້າທີ່ສັງເກດເຫັນໄດ້ຊັດເຈນແມ່ນຄວາມເປັນເຈົ້າການໃນລະດັບຊາດ, ຄວາມສອດຄ່ອງ ແລະ ເປີດກ້ວາງການເປັນຄູ່ຮ່ວມແບບກວມລວມເພື່ອໝາກຜົນຂອງການພັດທະນາ.<br>• **ແນວທາງຮູບແບບໃໝ່** - ການຮ່ວມມືແບບໃຕ້-ໃຕ້ ແລະ ເສີມສ້າງການມີສ່ວນຮ່ວມຂອງພາກເອກະຊົນ<br>• **ສິ່ງທ້າທາຍທີ່ມີມາຍາວນານ** - ການກະຈາຍການຊ່ວຍເຫຼືອ, ຂໍ້ຈຳກັດທາງດ້ານຂີດຄວາມສາມາດ, ການວັດແທກຜົນໄດ້ຮັບຍັງເປັນສິ່ງທ້າທາຍ | • **ຍຸດທະສາດລະໄລຍະຍາວ** - ສ້າງຍຸດທະສາດໄລະຍະຍາວສຳລັບການຮ່ວມມືເພື່ອການພັດທະນາຢ່າງມີປະສິດທິຜົນ (2025-2035) ໂດຍມີການເຊື່ອມສານເຂົ້າກັບຍຸດທະສາດການເງິນ.<br>• **ຄວາມເປັນເຈົ້າການທີ່ຊັດເຈນ** - ກ້າວໄປສູ່ຄວາມເປັນເຈົ້າຂອງຢ່າງຊັດເຈນຕໍ່ກັບໝາກຜົນຂອງການພັດທະນາ.<br>• **ການວັດແທກຜົນໄດ້ຮັບ** - ເພີ່ມທະວີການວັດແທກຜົນໄດ້ຮັບຂອງການມີສ່ວນຮ່ວມຂອງຫຼາຍພາກສ່ວນ. | • **ການຕິດຕາມທີ່ອີງໃສ່ຜົນໄດ້ຮັບເປັນຫຼັກ** - ສ້າງຂີດຄວາມສາມາດແຫ່ງຊາດໃນການຕິດຕາມປະເມີນຜົນທີ່ອີງໃສ່ຜົນໄດ້ຮັບ<br>• **ການນຳໃຊ້ລະບົບພາຍໃນປະເທດ** - ສົ່ງເສີມໃຫ້ບັນດາຄູ່ຮ່ວມພັດທະນານຳໃຊ້ລະບົບພາຍໃນປະເທດ<br>• **ລະບົບການຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA-MIS)** - ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງລະບົບ ODA-MIS. |

# ສະຫຼູບຄວາມຄືບໜ້າໂດຍລວມ

## ການເພີ່ມທະວີການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ

- **ພາກສ່ວນ ຫຼື ອົງການທີ່ບໍ່ສັງກັດລັດຖະບານ (NSA)** - ສຸມໃສ່ການມີສ່ວນຮ່ວມຢ່າງມີຄຸນນະພາບຂອງພາກສ່ວນ ຫຼື ອົງການທີ່ບໍ່ສັງກັດລັດຖະບານ ຫຼາຍກວ່າການເປັນຕົວແທນ.
- **ການເສີມຂະຫຍາຍການຮ່ວມມື** - ເພີ່ມທະວີການຮ່ວມມືຜ່ານກົນການການຮ່ວມມືກັບບັນດາຄູ່ຮ່ວມພັດທະນາແບບເກົ່າ ແລະ ແບບໃຫມ່.
- **ຍຸດທະສາດສໍາລັບພາກເອກະຊົນ** - ສ້າງຍຸດທະສາດທີ່ຮອບດ້ານເພື່ອສົ່ງເສີມ ແລະ ນໍາໃຊ້ທ່າແຮງຂອງພາກເອກະຊົນ.

## ສະຫຼູບສຸດທ້າຍ

**ສປປ ລາວ ມີຄວາມຕັ້ງໃຈທີ່ຈະປັບປຸງແນວທາງ ແລະ ຄູ່ຮ່ວມມື ເພື່ອຮັບມືກັບສິ່ງທ້າທາຍໃນອະນາຄົດ.**

**ຈາກປະສົບການຂອງ VDCAP ໄດ້ສ້າງພື້ນຖານອັນເຂັ້ມແຂງໃຫ້ແກ່ການສ້າງຍຸດທະສາດການຮ່ວມມືເພື່ອການພັດທະນາໃນໄລຍະຕໍ່ໄປ.**

# ຂໍຂອບໃຈ